# ຊົມເຊີຍຜົນສຳເລັດ

## ສະຫຼຸບຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ກຳນົດທິດທາງແຜນການປະຈຳປີ 2026

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຈັດກອງປະຊຸມສະຫລຸບຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ກຳນົດທິດທາງແຜນການປະຈຳປີ 2026, ໃນວັນທີ 05 - 06 ກຸມພາ 2026 ທີ່ ໂຮງແຮມ ລາດຊະວົງວັນດ້າວິສຕ້າ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ພ້ອມດ້ວຍຄະນະອຳນວຍການ, ບັນດາຄະນະພະແນກ, ສູນ ແລະ ສາຂາທົ່ວລະບົບ ເຂົ້າຮ່ວມຫຼາຍກວ່າ 170 ທ່ານ.




ຈຸດປະສົງກອງປະຊຸມເພື່ອປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ຕະຫຼອດໄລຍະ 01 ປີຜ່ານມາ ແລະ ກຳນົດທິດທາງແຜນການໃນຕໍ່ໜ້າ. ພ້ອມນັ້ນ, ຍັງມີການມອບລາງວັນຍ້ອງຍໍໃຫ້ບັນດາສາຂາ ທີ່ມີຜົນງານການຈັດຕັ້ງປະຕິບັດວຽກງານ KPI ເພື່ອເປັນບ່ອນຢັ້ງຢືນການປະຕິບັດວຽກງານຂອງສາຂາດັ່ງກ່າວ.






# ສະຫຼຸບຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ກຳນົດທິດທາງແຜນການປະຈຳປີ 2026








ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ລາຍງານວ່າ ການດຳເນີນທຸລະກິດຂອງ ທຄຕລ ພາຍໃນປີ 2025 ມີຫຼາຍດ້ານທີ່ປັບຕົວດີຂຶ້ນ ເປັນຕົ້ນແມ່ນຕົວເລກຖານະການເງິນ, ເງິນຝາກ ແລະ ເງິນກູ້ ມີການເພີ່ມຂຶ້ນ ແລະ ປະຕິບັດໄດ້ລື່ນແຜນການທີ່ກຳນົດໄວ້; ດ້ານຜົນການດຳເນີນງານພວກເຮົາສາມາດມີກຳໄລລື່ນແຜນ ແລະ ມີທ່າກ້າວທີ່ດີທຽບໃສ່ປີຜ່ານມາ. ທັງໝົດນັ້ນ, ແມ່ນໝາກຜົນຂອງການທຸ້ມເທເຫື່ອແຮງ ແລະ ສະຕິປັນຍາ ຂອງພະນັກງານ ທຄຕລ ໝົດທຸກຄົນ ໃນຕະຫຼອດໄລຍະ 01 ປີຜ່ານມາ ຈຶ່ງເຮັດໃຫ້ພວກເຮົາສາມາດຍາດໄດ້ຜົນງານອັນໃຫຍ່ຫຼວງດັ່ງກ່າວ.

ໃນປີ 2026 ທຄຕລ ຈະສຸມໃສ່ການດຳເນີນທຸລະກິດແບບຍືນຍົງ, ປັບປຸງການບໍລິການໃຫ້ດີຂຶ້ນກວ່າເກົ່າ, ສ້າງຄວາມເຊື່ອໝັ້ນໃຫ້ຜູ້ຖືຮຸ້ນ ແລະ ນັກລົງທຶນ ເປັນຕົ້ນແມ່ນຍົກສູງຄຸນນະພາບສິນເຊື່ອໃຫ້ມີປະສິດທິພາບ, ຖືເອົາວຽກງານການຫັນເປັນທັນສະໄໝ ເພື່ອຮັກສາຄວາມເປັນຜູ້ນຳດ້ານ Digital Banking, ເພີ່ມຄວາມຫຼາກຫຼາຍຂອງຜະລິດຕະພັນ, ສ້າງຄວາມເຂັ້ມແຂງທາງດ້ານການເງິນ, ຮ່ວມມືທຸລະກິດກັບພາກສ່ວນພາຍນອກ ເພື່ອເພີ່ມໂອກາດທາງທຸລະກິດ, ຫຼຸດຜ່ອນດ້ານລາຍຈ່າຍທີ່ບໍ່ຈຳເປັນ.

ກອງປະຊຸມໄດ້ດຳເນີນເປັນເວລາ 02 ວັນ ເຕັມ ເຊິ່ງເຕັມໄປດ້ວຍບັນຍາກາດອັນຟົດຟື້ນ ແລະ ປິດລົງດ້ວຍໝາກຜົນອັນຈົບງາມເຊິ່ງສະແດງໃຫ້ເຫັນເຖິງຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ ແລະ ຄວາມພ້ອມຢ່າງເຕັມສ່ວນ ທີ່ຈະຮ່ວມກັນຊຸກຍູ້ ທຄຕລ ກ້າວໄປສູ່ການເຕີບໂຕທີ່ຍືນຍົງ, ແຂງແກ່ນ ແລະ ໝັ້ນຄົງ.

ຂຽນຂ່າວ: ນ. ສຸກພາວັນ ສີວົງໄຊ
ຖ່າຍພາບ: ທ.ກັນຍາ ໄຊຍະຫານ ແລະ ທ.ວິໄລສັກ ພົມທະພອນ
ພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່